ອົງການໄອຍະການປະຊາຊົນ
ເຂດ II
ຮັບ
ເລກທີ. 233
ວັນທີ 26/10/2011

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------

ອົງການໄອຍະການປະຊາຊົນສູງສຸດ

ເລກທີ 22 /ອອປສ.

ນະຄອນຫລວງວຽງຈັນ, ວັນທີ 25/4/2011.

ອົງການໄອຍະການປະຊາຊົນ
ແຂວງຫຼວງພະ...
ຮັບ
ເລກທີ 66
ວັນທີ 11.05.11

# ຄຳແນະນຳ

## ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ

ເຖິງ : ຫົວໜ້າອົງການໄອຍະການປະຊາຊົນພາກ, ແຂວງ, ນະຄອນ ແລະ ເຂດ ໃນຂອບເຂດທົ່ວປະເທດ.

ເລື່ອງ : ສິດ ແລະ ໜ້າທີ່ໃນການສັ່ງຟ້ອງຜູ້ຖືກຫາຂຶ້ນສານຂອງຫົວໜ້າອົງການໄອຍະການປະຊາຊົນເຂດ.

- ອີງຕາມ ມາດຕາ 10, 13, 18, 27, 34, 45, 46 ແລະ 47 ຂອງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງ ປີ 2009.
- ອີງຕາມ ມາດຕາ 27 ຂໍ້ 2 ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009.
- ອີງຕາມ ຄຳແນະນຳຂອງສານປະຊາຊົນສູງສຸດ ສະບັບເລກທີ 426/ສປສສ, ລົງວັນທີ 24 ສິງຫາ 2010.

ຜ່ານການຈັດຕັ້ງປະຕິບັດໜ້າທີ່ວຽກງານ ຂອງຫົວໜ້າອົງການໄອຍະການປະຊາຊົນເຂດ ໃນການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ໃນໄລຍະຜ່ານມາເຫັນວ່າ ໄດ້ປະຕິບັດຖືກຕ້ອງຕາມກົດໝາຍ ແຕ່ກໍຍັງມີບາງບັນຫາທີ່ຍັງບໍ່ທັນຈັດຕັ້ງປະຕິບັດໄດ້ຢ່າງເປັນເອກະພາບກັນ. ເພື່ອປະຕິບັດສິດ ແລະ ໜ້າທີ່ໃນການສັ່ງຟ້ອງຜູ້ຖືກຫາຂຶ້ນສານຂອງຫົວໜ້າອົງການໄອຍະການປະຊາຊົນເຂດ ໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

ຫົວໜ້າອົງການໄອຍະການປະຊົນສູງສຸດ ຈຶ່ງອອກຄຳແນະນຳດັ່ງນີ້ :

1. ຫົວໜ້າອົງການໄອຍະການປະຊາຊົນເຂດມີສິດ ແລະ ໜ້າທີ່ໃນການສັ່ງຟ້ອງຜູ້ຖືກຫາຂຶ້ນສານໃນຄະດີອາຍາທີ່ກົດໝາຍກຳນົດໂທດຕັດອິດສະລະພາບສູງສຸດ ບໍ່ເກີນ 3 ປີ ເຊັ່ນ : 3 ເດືອນ ຫາ 1 ປີ, 3 ເດືອນ ຫາ 2 ປີ, 1 ປີ ຫາ 3 ປີ ແລະ ອື່ນໆ.

ຕົວຢ່າງ :

ກ. ການກະທຳຜິດທາງອາຍາໃນສະຖານການບໍ່ປະຕິບັດຕາມຄຳຕັດສິນ ຫລື ຄຳສັ່ງຂອງ

ສານຕາມມາດຕາ 173 ຂອງກົດໝາຍອາຍາ ຜູ້ກະທຳຜິດຈະຖືກລົງໂທດຕັດອິດສະລະພາບ ແຕ່ 3 ເດືອນຫາ 1 ປີ.

ຂ. ການກະທຳຜິດທາງອາຍາໃນສະຖານການຫາຄວາມບໍ່ຈິງໃສ່ຜູ້ອື່ນຕາມມາດຕາ 163 ຂອງກົດໝາຍອາຍາ ຜູ້ກະທຳຜິດຈະຖືກລົງໂທດຕັດອິດສະລະພາບ ແຕ່ 1 ປີ ຫາ 3 ປີ ແລະ ອື່ນໆ.

2. ໃນກໍລະນີມາດຕາໃດ ຫລື ວັກໃດ ກຳນົດໂທດສູງເກີນກວ່າ 3 ປີ ເຊັ່ນ : 1 ປີ ຫາ 5 ປີ, 2 ປີ ຫາ 5 ປີ ຫລື ອື່ນໆ ນັ້ນຫົວໜ້າອົງການໄອຍະການປະຊາຊົນເຂດບໍ່ມີສິດ ແລະ ໜ້າທີ່ສັ່ງຟ້ອງໃນກໍລະນີດັ່ງກ່າວ, ຕ້ອງສົ່ງສຳນວນຄະດີໃຫ້ຫົວໜ້າອົງການໄອຍະການປະຊາຊົນແຂວງ ຫລື ນະຄອນຫລວງ ເປັນຜູ້ສັ່ງຟ້ອງໃຫ້ສານປະຊາຊົນແຂວງ ຫລື ນະຄອນຫລວງເປັນຜູ້ພິຈາລະນາຕັດສິນຕາມຂັ້ນຕອນຂອງກົດໝາຍ.

**ຕົວຢ່າງ :**

ກ. ການກະທຳຜິດທາງອາຍາໃນສະຖານສໍ້ໂກງຊັບຂອງພົນລະເມືອງ ຕາມມາດຕາ 120 ໄດ້ມີ 2 ວັກ ທີ່ກຳນົດໂທດແຕກຕ່າງກັນຄື : ວັກທີ 1 ກຳນົດໂທດຕັດອິດສະລະພາບແຕ່ 3 ເດືອນ ຫາ 2 ປີ ແມ່ນສິດໜ້າທີ່ຂອງຫົວໜ້າອົງການໄອຍະການປະຊາຊົນເຂດສັ່ງຟ້ອງ, ວັກທີ 2 ກຳນົດໂທດ ຕັດອິດສະລະພາບແຕ່ 2 ປີ ຫາ 5 ປີ ແມ່ນສິດໜ້າທີ່ຂອງຫົວໜ້າອົງການໄອຍະການປະຊາຊົນແຂວງ ຫລື ນະຄອນຫລວງ ເປັນຜູ້ສັ່ງຟ້ອງ.

3. ໃນກໍລະນີມີການຮ່ວມກັນກະທຳຜິດຫລາຍຄົນຜິດຕໍ່ມາດຕາດຽວ ແຕ່ຫລາຍວັກ ຫລື ຜິດຕໍ່ຫລາຍມາດຕາເຊັ່ນ : ບາງຜູ້ກະທຳຜິດກົດໝາຍອາຍາກຳນົດໂທດຕັດອິດສະລະພາບບໍ່ເກີນ 3 ປີ, ບາງຜູ້ກະທຳຜິດກົດໝາຍອາຍາກຳນົດໂທດຕັດອິດສະລະພາບເກີນກວ່າ 3 ປີ ຂຶ້ນໄປນັ້ນໃຫ້ຖືເອົາການກະທຳຜິດທີ່ມີໂທດຕັດອິດສະລະພາບເກີນກວ່າ 3 ປີ ເປັນຫລັກໃນການສັ່ງຟ້ອງ ໝາຍຄວາມວ່າ ຫົວໜ້າອົງການໄອຍະການປະຊາຊົນເຂດບໍ່ມີສິດ ແລະ ໜ້າທີ່ໃນການສັ່ງຟ້ອງຜູ້ຖືກຫາ ແລະ ຄະດີດັ່ງກ່າວ, ແຕ່ຕ້ອງສົ່ງສຳນວນຄະດີໃຫ້ຫົວໜ້າອົງການໄອຍະການປະຊາຊົນແຂວງ ຫລື ນະຄອນຫລວງເປັນຜູ້ມີສິດ ແລະ ໜ້າທີ່ສັ່ງຟ້ອງໃຫ້ສານປະຊາຊົນແຂວງ ຫລື ນະຄອນຫລວງ ຕາມຂັ້ນຕອນຂອງກົດໝາຍ.

**ຕົວຢ່າງ** : ທ້າວ ກ ແລະ ທ້າວ ຂ ໄດ້ຮ່ວມກັນກະທຳຜິດຕໍ່ຄວາມປອດໄພຂອງການຈະລາຈອນ ຕາມມາດຕາ 85 ຂອງກົດໝາຍອາຍາ. ທ້າວ ກ ມີຄວາມຮັບຜິດຊອບຕາມວັກທີ 1

ຂອງມາດຕາ ດັ່ງກ່າວຄື : ຈະຖືກລົງໂທດຕັດອິດສະລະພາບແຕ່ 6 ເດືອນ ຫາ 2 ປີ. ທ້າວ ຂ ມີຄວາມຮັບຜິດ ຊອບຕາມວັກທີ 2 ຄື : ຈະຖືກລົງໂທດຕັດອິດສະລະພາບ ແຕ່ 6 ເດືອນຫາ 10 ປີ ໃນກໍລະນີດັ່ງກ່າວນີ້ແມ່ນສິດ ແລະ ໜ້າທີ່ຂອງຫົວໜ້າອົງການໄອຍະການປະຊາຊົນແຂວງ ຫລື ນະຄອນ ຫລວງ ເປັນຜູ້ສັ່ງຟ້ອງ.

ດັ່ງນັ້ນ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຈຶ່ງແນະນຳມາຍັງຫົວໜ້າອົງການໄອຍະການປະຊາຊົນພາກ, ແຂວງ, ນະຄອນຫລວງ ແລະ ເຂດ ເພື່ອຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ອົງການໄອຍະການປະຊາຊົນສູງສຸດ

ລັງສີ ສີບຸນເຮືອງ